ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໓/ປພຖຊ/໑໐໐໔໐໙**

# ບົດຄວາມ

## ຕອບໂຕ້ທ່ານສຸທັມ ສາກົນນິຍົມ

## ທູດລາວ ປະຈຳປະເທດ **Belgique.** (ຕອນ 2).

ທ່ານທູດ ອວດອ້າງວ່າ ເມືອງລາວ ມີສະຖຽນຣະພາບດີນັ້ນ, ແມ່ນບໍ່ຖືກຕ້ອງ!... ທ່ານທູດຄວນຈະເວົ້າວ່າ "ມີສະຖຽນຣະພາບ ພາຍໃຕ້ອຳນາດປາຍປືນບັງຄັບ ຈິ່ງຈະຖືກຕ້ອງຕາມຄວາມເປັນຈິງ! ພັກຣັດ ຍຶດອຳນາດໄດ້ແລ້ວ ກໍເອົາທະຫານວຽດນາມ ເຂົ້າມາໃນລາວ 60 ພັນຄົນ ເພື່ອປາບປາມປະຊາຊົນ ບໍ່ໃຫ້ຕ້ານ ພັກຣັດ. ແຕ່ເມື່ອອົງການຈັດຕັ້ງສາກົນ ແລະບັນດາປະເທດຕ່າງໆ ທີ່ຮັກຫອມສັນຕິພາບ ໄດ້ທັກທ້ວງ ກ່າວປະນາມ ແລະບີບຣັດ ໃຫ້ວຽດນາມຢຸດຕິແຊກແຊງລາວ, ກອງກຳລັງທະຫານວຽດນາມ ກໍປະກາດຖອນກັບຄືນ. ແຕ່ໃນຕົວຈິງແລ້ວ, ຊ້ຳພັດປ່ຽນຮູບ ມາເປັນ ທະຫານນອກເຄື່ອງແບບ, ເປັນນັກສືບ ສອດແນມ, ເປັນພໍ່ຄ້າຊາວຊາຍ-ຫາບເລ້, ເປັນກັມມະກອນແບກຫາບ, ລ້ຽງເປັດຕາມທົ່ງໄຮ່ທົ່ງນາ ເປັນນັກວິຊາການ ອາສາສມັກພັທນາ 4 ເຂດພາກໃຕ້ຂອງລາວ ແລະເປັນສັນຊາດລາວ ດັ່ງນີ້ເປັນຕົ້ນ. ເມື່ອປະຊາຊົນລາວ ແລະຊາວໂລກ ຮູ້ທັນ...ພັກຣັດ ຈິ່ງປ່ຽນວິທີຊ້ອນເຊື່ອງ ແລະພາງຕົວທະຫານວຽດນາມ ອີກແບບໃໝ່ ຄື ປະກາດຮຽກຮ້ອງໃຫ້ ນັກລົງທຶນເຂົ້າມາໃນລາວ, ແຕ່ ຜູ້ທີ່ມີເງື່ອນໄຂເຂົ້າມາລາວໄດ້ຫລາຍ ກວ່າໝູ່ ກໍແມ່ນວຽດນາມ. ດັ່ງທີ່ພວກເຮົາເຫັນກັນຢູ່ໃນປະຈຸບັນນີ້, ນັກທຸຣະກິດ ການຄ້າ, ການລົງທຶນຕ່າງໆ ໃນລາວ ໂດຍສະເພາະການສັມປະທານທີ່ດິນປູກຝັງ ແມ່ນມາຈາກ ບໍຣິສັດຂອງວຽດນາມ ຜູ້ໄດ້ຮັບ ສຳປະທານຫລາຍກວ່າໝູ່. ຄົນງານສ່ວນຫລວງຫລາຍ ກໍແມ່ນທະຫານວຽດນາມ ຢູ່ໃນຄາບຊາວສວນ. ຈະອີ້ນວ່າ ມີສະຖຽນຣະພາບ ໂດຍບໍ່ໃຊ້ອຳນາດປາຍປືນ ໄດ້ຢ່າງໃດ? ແມ່ນແຕ່ນັກທ່ອງທ່ຽວ ກໍຍັງ ມີທະຫານເອົາປືນຍາມ, ພວກເຂົາມີຄວາມຕົກໃຈ ແລະຫວາດກົວ!.

ເຖິງແມ່ນພັກຣັດ ຈະຢືມມືຕ່າງຊາດ ໃຊ້ອຳນາດປາຍປືນ ປາບປາມຄົນລາວ ຫລາຍປານໃດກໍຕາມ, ພັກຣັດ ກໍບໍ່ສາມາດ ທີ່ຈະຢຸດຢັ້ງການຕໍ່ສູ້ ຂອງປະຊາຊົນ ເພື່ອສ້າງຄວາມສາມະຄີປອງດອງຊາດໄດ້. ແມ່ນວ່າ ພັກຣັດ ຈະໃຊ້ທຸກຮູບແບບ, ທຸກແຜນຍຸດທະສາດ, ຈະເປັນ ການປຸກລະດົມປະຊາຊົນໃຫ້ ຕອບຕ້ານ ການຫັນປ່ຽນໂດຍສັນຕິ, ຈະເປັນ ການປະຕິບັດແຜນດັບສູນນັກຕໍ່ສູ້ ຕາມຊາຍແດນ ລາວ-ໄທຍ ໃນ ໂຄງການຮັກສາຄວາມສງົບຮຽບຮ້ອຍລາວ-ໄທຍ, ຈະເປັນ ໂຄງການດັບສູນອົພຍົບ ກັບຄືນ ປະເທດ, ຈະເປັນ ແຜນການນຳເອົາທະຫານວຽດນາມ ເຂົ້າມາກວາດລ້າງ ໃນຕົ້ນເດືອນ ມົກກະຣາ 1999 ໂດຍອ້າງວ່າ ເປັນນັກວິຊາການ ເຂົ້າມາພັທນາ 4 ແຂວງພາກໃຕ້. ພ້ອມດຽວກັນ, ພັກຣັດ ກໍໄດ້ປະກາດ ດັບສູນ ການຕໍ່ສູ້ ຂອງປະຊາຊົນລາວ ໃຫ້ໝົດລົງ ໃນປີ 2003 ແລະແຜນສຸດທ້າຍ ກໍສວຍໃຊ້ຄົນລາວ ນອກປະເທດ ທັບມ້າງກັນເອງ ໂດຍໃຊ້ນັກສືບສອດແນມເຂົ້າໄປ ເຄື່ອນໄຫວ ໃນຄາບນັກບວດ ນັກທ່ອງທ່ຽວ, ນັກຮ້ອງ, ນັກສິລປະວັນນະຄະດີ, ນັກການທູດ ອອກໄປ ໂຄສະນາຊວນເຊື່ອ. ແຕ່ທັງໝົດ ທີ່ກ່າວມານີ້, ລ້ວນແລ້ວແຕ່ໄດ້ຮັບຄວາມປຣາໄຊລົງຢ່າງ ສິ້ນເຊີງ! ເພາະປະຊາຊົນລາວ ຮູ້ທັນ ເກມການເມືອງ ຂອງພັກຣັດ.

ສນັ້ນ, ການທີ່ທ່ານທູດວ່າ "ມີຄວາມສງົບດີ, ມີສະຖຽຣະພາບທາງການເມືອງນັ້ນ, ແມ່ນບໍ່ຖືກກັບ ຄວາມເປັນຈິງ! ເພາະການຕໍ່ສູ້ ຂອງປະຊາຊົນລາວ ຕາມແນວທາງສັນຕິວິທີ ເພື່ອສ້າງຄວາມ ສາມະຄີ ປອງດອງຊາດນັ້ນ ມີມາໄດ້ຕລອດ ແລະນັບວັນນັບມີຄວາມກວ້າງຂວາງຫລາຍຂຶ້ນ ເປັນລຳດັບ ພຽງແຕ່ ພັກຣັດ ບໍ່ຍອມຮັບຮູ້ຄວາມເປັນຈິງເທົ່ານັ້ນເອງ. ພວກເຮົາໝັ້ນໃຈວ່າ ອີກບໍ່ດົນ...ເວລາກໍຈະໄດ້ພິສູດໃຫ້ ທຸກຄົນ ໄດ້ຮູ້ເຖິງຄວາມເປັນຈິງ.

ທ່ານທູດ ອວດອ້າງວ່າ ປະຊາຊົນລາວ ມີຄວາມສາມະຄີກັນ ເປັນຢ່າງດີ, ບັນດາເຜົ່າ ຢູ່ຮ່ວມກັນ ຢ່າງກົມກຽວໜຽວແໜ້ນ!. ທ່ານທູດ ອວດອ້າງໄດ້ຢ່າງໃດ ໃນເມື່ອບັນຫາຊົນເຜົ່າ ກໍຍັງແກ້ກັນບໍ່ທັນຕົກ ຮອດປະຈຸບັນນີ້. ຍິ່ງໄປກວ່ານັ້ນ, ຄນະພັກຄນະບັນຊາ ກໍມີຄວາມຂັດແຍ້ງຜົນປໂຍດກັນ ຢ່າງເອົາເປັນ ເອົາຕາຍ. ກາຍເປັນນັກປະຕິວັດແຕກປອກໝົດກ້ຽງ! ກຸ່ມນິຍົມວຽດນາມ ກໍຊັກດຶງ ເອົາ ວຽດນາມ ເຂົ້າມາ. ກຸ່ມນິຍົມຈີນ ກໍຊັກດຶງເອົາຈີນເຂົ້າມາ, ກຸ່ມນິຍົມຣັດເຊັຽ ກໍຊັກດຶງເອົາ ຣັດເຊັຽ ເຂົ້າມາ, ກຸ່ມນິຍົມໄທຍ ກໍຊັກດຶງເອົາໄທຍ, ເອົາສິງກະໂປ, ເອົາມາເລເຊັຽ, ອິສຕຣາລີເຂົ້າມາ. ແຕ່ລະກຸ່ມ ກໍຫວັງເອົານັກລົງທຶນຕ່າງຊາດ ເປັນເສື້ອເກາະປ້ອງກັນຕົວ ແລະເປັນແຫລ່ງສໍ້ໂກງ ໃຫ້ໄດ້ ຫລາຍເທົ່າທີ່ ຈະຫລາຍໄດ້ ເພື່ອຕຽມຕົວເອົາເງິນຄຳເຫລົ່ານັ້ນ ອອກໄປສເວີຍສຸຂ ຢູ່ໃນ ຕ່າງປະເທດ ເມື່ອເວລານັ້ນ ຫາກມາເຖິງ! ສະພາບການເປັນຈິງ ຄືແນວນີ້ ຈະເອີ້ນວ່າ ເປັນເອກະພາບ ປອງດອງໄດ້ຢ່າງໃດ?

ໂປຣດຕິດຕາມຕອນ ທີ 3 ຕໍ່ໄປ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໐ ກຸມພາ ໒໐໐໙**